ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------=====0000=====--------------

ສານປະຊາຊົນແຂວງຫຼວງພະບາງ

ຄະນະສານ ແພ່ງ

# ບົດບັນທຶກການໄກ່ເກ່ຍ

ອີງຕາມ ມາດຕາ 18 (ປັບປຸງ) ຂອງກົດໝາຍວ່າດ້ວຍສານປະຊາຊົນສະບັບປັບປຸງ ປີ 2009.

ອີງຕາມ ມາດຕາ 199 (ປັບປຸງ) ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012.

ອີງຕາມ ສຳນວນຄະດີແພ່ງ ເລກທີ 17/ຂຕ.ພ, ລົງວັນທີ 11 ທັນວາ 2015

ລະຫວ່າງ

ທ້າວ ເພັດຈຳພອນ ຂຸນດາລາ ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ 02, ເຮືອນເລກທີ 22, ບ້ານຊຽງທອງ, ເມືອງຫຼວງພະບາງ ແຂວງຫຼວງພະບາງ.................ໂຈດ.

ນາງ ບຸນທັນ ອາຍຸ 58 ປີ, ສັນຊາດລາວ, ອາຊີບ ຄ້າຂາຍ, ປັດຈຸບັນຢູ່ໜ່ວຍ 05, ເຮືອນເລກທີ 90, ບ້ານສັງຄະໂລກ, ເມືອງຫຼວງພະບາງ ແຂວງຫຼວງພະບາງ..........................................ຈຳເລີຍ.

ກ່ຽວເລື່ອງ: ທວງເອົາເງິນຄືນ

ໃນວັນທີ 3 ມີນາ 2016 ເວລາ 09 ໂມງ ທີ່ຫ້ອງການສານປະຊາຊົນ ແຂວງຫຼວງພະບາງ ຕໍ່ໜ້າຜູ້ພິພາກສາທ່ານ ແສງດາວເພັດ ເວດມະນີ ນັ່ງພ້ອມດ້ວຍ ຈ່າສານ ທ່ານ ສອນເພັດ ພັນທະສິນ ຜ່ານການໄກ່ເກ່ຍໂຈດ ແລະ ຈຳເລີຍ ສາມາດຕົກລົງກັນໄດ້ດັ່ງນີ້:

ຝ່າຍທ້າວ ເພັດຈຳພອນ ຂຸນດາລາ (ໂຈດ) ໄດ້ສະເໜີວ່າ: ກ່ຽວກັບການຊື້ຂາຍທີ່ດິນສອງຕອນລະຫວ່າງຕົນ ແລະ ນາງ ບຸນທັນ (ຈຳເລີຍ) ຊຶ່ງທີ່ດິນຕອນທີໜຶ່ງມີເນື້ອທີ່ 263 ຕາແມັດ ທີ່ດິນຕອນທີ່ສອງ ມີເນື້ອທີ່ 1 ເຮັກຕາ 5868 ຕາແມັດ ແລະ ພາຍຫຼັງທີ່ຕົນໄດ້ຈ່າຍເງິນຄ່າທີ່ດິນໝົດແລ້ວ ແລະ ໄດ້ມາວັດແທກທີ່ດິນ ຕອນທີ່ສອງຕົວຈິງແລ້ວ ແຕ່ເນື້ອທີ່ດິນແມ່ນບໍ່ພໍ 1 ເຮັກຕາ ຕາມສັນຍາຊື້ຂາຍທີ່ດິນສະບັບລົງວັນທີ 8 ມັງກອນ 2012 ຕົນແມ່ນສະເໜີໃຫ້ນາງ ບຸນທັນ (ຈຳເລີຍ) ຊອກທີ່ດິນຕອນໃໝ່ມາໃຫ້ຕົນ ເຖິງວ່າເນື້ອທີ່ດິນຈະບໍ່ຄົບຕາມເນື້ອທີ່ 1 ເຮັກຕາ ກໍ່ຕາມ ແຕ່ຫາກນາງ ບຸນທັນ (ຈຳເລີຍ) ບໍ່ມີທີ່ດິນມາໃຫ້ຕົນ ແມ່ນ ໃຫ້ນາງ ບຸນທັນ (ຈຳເລີຍ) ສົ່ງເງິນຄ່າທີ່ດິນ 1 ເຮັກຕາ ຄິດໄລ່ເປັນຈຳນວນ 5.952.055 ບາດ ຄືນໃຫ້ແກ່ຕົນ.

ຝ່າຍນາງ ບຸນທັນ (ຈຳເລີຍ) ໄດ້ສະເໜີວ່າ: ກ່ຽວກັບການສະເໜີຂອງທ້າວ ເພັດຈຳພອນ ຂຸນດາລາ (ໂຈດ) ໄດ້ສະເໜີມາຂ້າງເທິງນັ້ນ ຕົນແມ່ນບໍ່ເຫັນດີເພາະວ່າຕົນແມ່ນບໍ່ມີທີ່ດິນຈະມາໃຫ້ທ້າວ ເພັດຈຳພອນ ຂຸນດາລາ (ໂຈດ) ແລະ ຕົນກໍບໍ່ມີເງິນຈະມາໃຊ້ແທນຄ່າທີ່ດິນຄືນໃຫ້ແກ່ທ້າວ ເພັດຈຳ

ພອນ ຊຸນດາລາ (ໂຈດ) ເງິນທີ່ໄດ້ຈາກການຂາຍທີ່ດິນທັງສອງຕອນນັ້ນ ຕົນແມ່ນໄດ້ໃຊ້ຈ່າຍໄປໝົດແລ້ວ ແລະ ທີ່ດິນທັງສອງຕອນດັ່ງກ່າວນັ້ນ ຕົນແມ່ນໄດ້ຂາຍເປັນຕອນ ຕົນບໍ່ໄດ້ຂາຍເປັນຕາແມັດ.

ໝາຍເຫດ: ຜ່ານການໄກ່ເກ່ຍຊ້ອງໜ້າກັນແລ້ວ ເຫັນວ່າທາງຝ່າຍທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແລະ ຝ່າຍນາງ ບຸນທັນ (ຈຳເລີຍ) ແມ່ນບໍ່ສາມາດຕົກລົງກັນໄດ້ທາງຝ່າຍທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແລະ ຝ່າຍນາງ ບຸນທັນ (ຈຳເລີຍ) ແມ່ນໄດ້ສະເໜີໃຫ້ສານປະຊາຊົນແຂວງຫຼວງພະບາງ ໄດ້ຄົ້ນຄວ້າພິຈາລະນາຕັດສິນໄປຕາມກົດໝາຍ.

ບົດບັນທຶກການໄກ່ເກ່ຍສະບັບນີ້ ເຮັດຂຶ້ນດວ້ຍຄວາມສະໝັກໃຈຂອງທັງສອງຝ່າຍ ໂດຍບໍ່ມີການບັງຄັບ ແລະ ຂົ່ມຂູ່, ເມື່ອໄດ້ອ່ານໃຫ້ຄູ່ຄວາມຟັງແລ້ວເຫັນວ່າຖືກຕອ້ງຕາມການຕົກລົງຈຶ່ງພອ້ມກັນລົງລາຍເຊັນໄວ້ເພື່ອເປັນຫຼັກຖານ.

ໂຈດແລະຈຳເລີຍ | ຜູ້ພິພາກສາ | ຈ່າສານ

1. 



ແສງດາວເພັດ ເວດມະນີ



ສອນເພັດ ພັນທະສິນ

2. 